Alert.seattle.gov/oiltrain(ຣົດໄຟລໍາລຽງນໍ້າມັນ)

**ຄວາມຈິງ:** ຣົດໄຟລໍາລຽງນໍ້າມັນຕົກລາງ ແມ່ນເຫດການສຸກເສີນທີ່ເປັນພັຍອັນຕະລາຍປະເພດໜຶ່ງ ເພາະມີໂອກາດທີ່ຈະລະເບີດ ມີນໍ້າມັນຮົ່ວໄຫຼ ຫຼືປ່ອຍອາຍພິດເຄມີແລະສານທີ່ເປັນອັນຕະລາຍອອກມາໃນສິ່ງແວດລ້ອມໄດ້. ເພື່ອຄວາມປອດພັຍຂອງສາທາລະນະຊົນ ອາດຈະມີການປະກາດສັ່ງໃຫ້ຍົກຍ້າຍ ຫຼື ຫຼົບພັຍຢູ່ກັບບ່ອນ ຢູ່ໃນບາງເຂດຂອງເມືອງຊີອາດໂຕ້ໃນປັດຈຸບັນ.

**ສິ່ງທີ່ຕ້ອງເຮັດ:**

- ເຮັດຕາມຂໍ້ແນະນໍາຂອງທີມຕອບສນອງຄວາມສຸກເສີນ. ຂຶ້ນກັບວ່າທ່ານຢູ່ບ່ອນໃດ ເຂົາເຈົ້າອາດບອກທ່ານໃຫ້ໜີຈາກບໍລິເວນນັ້ນ ຫຼື ຢູ່ກັບບ່ອນກໍໄດ້. ເມື່ອຖືກສັ່ງ ທ່ານຕ້ອງໜີໄວໆ.
- ຫ້າມກີດຂວາງທີມຕອບສນອງຄວາມສຸກເສີນ.
- ຖ້າເຂົາເຈົ້າສັ່ງໃຫ້ທ່ານຢູ່ກັບບ່ອນ ຈົ່ງເອົາຄອບຄົວແລະສັດລ້ຽງເຂົ້າມາຂ້າງໃນ. ປິດປະຕູ, ປ່ອງຢ້ຽມ ແລະ fireplace dampers(ຝາອັດປ່ອງຄັວນໄຟ). ເອົາຜ້າຊຸ່ມອຸດຮູທາງເຂົ້າປະຕູແລະຮູຕ່າງໆທີ່ມີລົມຂ້າງນອກລ່ວງເຂົ້າມາ. ປິດພັດລົມ, ອາຍເຢັນ, ອາຍອຸ່ນຫຼືລະບົບອື່ນໆທີ່ດູດອາກາດຈາກຂ້າງນອກ. ຕຽມຫາແນວສໍາຮອງແລະໃຊ້ສິ່ງທີ່ມີຢູ່ມາອຸດຮູຕ່າງໆ ເພື່ອສ້າງສິ່ງກີດກັນລົມທາງນອກບໍ່ໃຫ້ມາເຖິງທ່ານ.
- ເມື່ອມີປະກາດໃຫ້ຍົກຍ້າຍ ທ່ານຕ້ອງຍົກຍ້າຍດ່ວນ. ໃຫ້ໄປຕາມເສັ້ນທາງທີ່ໄດ້ຈັດໄວ້ຕາມການແຈ້ງບອກໃນການຍົກຍ້າຍ. ເສັ້ນທາງຍົກຍ້າຍບາງສາຍຈະມີປ້າຍຕິດໄວ້ຕາມຫົນທາງແລະທາງຫຼວງ(ຮາຍເວ)ຕ່າງໆ.
- ຫຼີກເວັ້ນບໍລິເວນທີ່ຣົດໄຟຕົກລາງ ຫຼື ຕໍາກັນ.
- ຕິດຕາມຂ່າວທາງວິທຍຸເພື່ອຟັງຂ່າວຄືບໜ້າກ່ຽວກັບຂໍ້ມູນສຸກເສີນ.
- **ຖ້າວ່າທ່ານຮູ້ຈັກຜູ້ໃດທີ່ບໍ່ເຂົ້າໃຈ ບໍ່ໄດ້ເບິ່ງ ຫຼືບໍ່ໄດ້ຍິນຂ່າວສານນີ້ ໃຫ້ທ່ານບອກເຂົາເຈົ້າຕໍ່.**

**ລິ້ງທີ່ເປັນປໂຍດ:**

http://dot111.info/

http://www.fra.dot.gov/Page/P0001